# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 19 ພຶສຈິກາ 2023 (11-19-2023)

---

## ມີນະລົກແທ້ບໍ່?

**ຈຸດສຳຄັນຂອງບົດຮຽນ.** ການລົງໂທດອັນຕລອດໄປເປັນນິດລໍຖ້າຜູ້ທີ່ບໍ່ຕິດຕາມພຣະຄຣິດ.

**ພຣະຄັມພີຕອບສນອງຊີວິດ.**

*ມີຫົວຂໍ້ເຣື່ອງໃດແດ່ທີ່ທ່ານບໍ່ຍົກມາເວົ້າກັນໃນພາເຂົ້າ?*

ອີລອນ ມັສກ໌ (Elon Musk) ຂ້ອນຂ້າງມີຊື່ສຽງຍ້ອນຫຼາຍເຫດຜົນ. ນອກເໜືອຈາກການເປັນນຶ່ງໃນຜູ້ຮັ່ງມີທີ່ສຸດໃນໂລກ, ລາວເປັນຜູ້ກໍ່ຕັ້ງແລະເປັນເຈົ້າຂອງ ອາວະກາດແທັສລາແອັກ (**Tesla, Space X), ບໍຣິສັດ ນິວຣາລິງກ໌ (Neuralink)**, ແລະບໍຣິສັດ ໂບຣິງ (Boring). ເມື່ອວັນທີ 9 ພຶສະພາ 2022, ມີຊາຍຄົນນຶ່ງໄດ້ສົ່ງຂໍ້ຄວາມຕໍ່ວ່າກັບ ອີລອນ ມັສກ໌ ໃນ ທວິດເຕີ (Twitter) ແລະໃນຂໍ້ຄວາມຂອງລາວຂຽນວ່າ, "ໃນຖານະທີ່ເປັນຄົນສລາດຫຼາຍ, ເຈົ້າຍັງບໍ່ເຄີຍຄົ້ນພົບຜູ້ສ້າງທີ່ຍິ່ງໃຫຍ່ຂອງໂລກນີ້ເທື່ອບໍ? ຖ້າວ່າເຈົ້າໄດ້ພົບ, ຕ້ອງໃຫ້ແນ່ນອນວ່າເຈົ້າສາຣະພາບສິ່ງນີ້ກ່ອນຫົວໃຈເຕັ້ນຄັ້ງສຸດທ້າຍ. ພຣະເຈົ້າອວຍພອນ ເຈົ້າ." ມັສກ໌ (Musk) ຕອບວ່າ, "ຂໍຂອບໃຈທ່ານສຳລັບຄຳພອນ, ແຕ່ບໍ່ເປັນຫັຽງທີ່ຂ້ອຍຈະໄປນະລົກ, ຖ້ານັ້ນແມ່ນຈຸດໝາຍປາຍທາງຂອງຂ້ອຍແທ້ໆ, ເພາະສ່ວນໃຫຍ່ທີ່ມະນຸດເກີດມາແມ່ນຈະຢູ່ທີ່ນັ້ນ." ວ້າວ, ມັນເປັນປໂຍກພິລຶກແທ້! ໃນຂນະທີ່ຫົວຂໍ້ເຣື່ອງນະລົກເປັນຫົວຂໍ້ທີ່ບໍ່ສະດວກສະບາຍສຳລັບຄົນສ່ວນຫຼາຍ, ມັນແມ່ນພາກສ່ວນນຶ່ງຂອງຄວາມເປັນຈິງ. ແນ່ນອນ ມັສກ໌ Musk ບໍ່ໄດ້ຮັບຮູ້ເຖິງຜົນສະທ້ອນຂອງຄຳຄິດເຫັນຂອງລາວ. ແຕ່, ນີ້ແມ່ນຫົວຂໍ້ທີ່ສຳຄັນຫຼາຍ, ເພາະວ່ານະລົກມີແທ້, ແລະພວກເຮົາຕ້ອງບອກຄົນອື່ນວ່າພວກເຂົາບໍ່ຈຳເປັນຕ້ອງໄປທີ່ນັ້ນ.

**ພຣະຄັມພີກ່າວວ່າຢ່າງໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3)

## <u>ສຶກສາພຣະຄັມພີ</u>

### 1. 2 ເທຊະໂລນິກ 1:3-7ກ

*3. ພີ່ນ້ອງທັງຫລາຍເອີຍ, ພວກເຮົາຈຳເປັນຕ້ອງຂອບພຣະຄຸນພຣະເຈົ້າເພາະເຈົ້າທັງຫລາຍຢູ່ສເມີ ແລະເປັນການສົມຄວນຢູ່ ດ້ວຍ*
*ວ່າຄວາມເຊື່ອຂອງພວກເຈົ້າກໍຈະເຣີນຫລາຍຂຶ້ນ ແລະຄວາມຮັກທີ່ມີຕໍ່ກັນຂອງເຈົ້າທຸກຄົນກໍທະວີຂຶ້ນຢ່າງຫລວງຫລາຍດ້ວຍ. 4. ຈົນ*
*ວ່າພວກເຮົາໄດ້ຍົກເອົາເຈົ້າທັງຫລາຍຂຶ້ນມາ ອວດໃນທ່າມກາງໝູ່ຄຣິສຕະຈັກຂອງພຣະເຈົ້າ ເພາະເຫດຄວາມພາກພຽນຂອງພວກເຈົ້າ*
*ແລະຍ້ອນຄວາມເຊື່ອໃນເວລາພວກເຈົ້າຖືກຂົ່ມເຫງນານາປະການ ແລະອົດທົນຄວາມທຸກລຳບາກຢູ່ນັ້ນ. 5. ເຣື່ອງນີ້ສະແດງໃຫ້ເຫັນ*
*ແຈ້ງເຖິງການຊົງພິພາກສາອັນຍຸດຕິທັມຂອງພຣະເຈົ້າເພື່ອເຈົ້າທັງຫລາຍຈະໄດ້ຊົງຖືວ່າ ເປັນຜູ້ສົມຄວນກັບພຣະຣາຊອານາຈັກຂອງ*
*ພຣະເຈົ້າ ເພາະເຫັນແກ່ຣາຊອານາຈັກນັ້ນແຫຼະ, ພວກເຈົ້າຈຶ່ງອົດທົນຄວາມທຸກລຳບາກຢູ່. 6. ເພາະວ່າພຣະເຈົ້າຊົງເຫັນວ່າເປັນການ*
*ຍຸດຕິທັມແລ້ວ ທີ່ຈະຊົງເອົາຄວາມຍາກລຳບາກໄປຕອບແທນຄົນເຫລົ່ານັ້ນ ທີ່ກໍ່ຄວາມຍາກລຳບາກໃຫ້ແກ່ພວກເຈົ້າ. 7. ແລະທີ່ຈະຊົງ*
*ໂຜດໃຫ້ເຈົ້າທັງຫລາຍຜູ້ຖືກຄວາມຍາກລຳບາກນັ້ນໄດ້ຮັບຄວາມບັນເທົາດ້ວຍກັນກັບພວກເຮົາ.*

ມີນະລົກແທ້ບໍ? ນັ້ນແມ່ນຄຳຖາມຍາກທີ່ຫຼາຍຄົນມີບັນຫາທີ່ຈະຕອບ. ບາງທີ່ເຫດຜົນຕົ້ນຕໍໃນການຍາກທີ່ຈະໃຫ້ຄຳຕອບແມ່ນຄົນສ່ວນຫຼາຍບໍ່ຕ້ອງການທີ່ຈະເຊື່ອວ່ານະລົກນັ້ນມີຢູ່ຈິງຫຼືບໍ. ຄຽງຄູ່ກັນນັ້ນແມ່ນຄວາມຮູ້ສຶກວ່ານະລົກເປັນສະຖານທີ່ທີ່ບໍ່ດີທີ່ຄົນ "ດີ" ຄືກັບຕົວເຮົາເອງແນ່ນອນວ່າບໍ່ສາມາດຖືກສົ່ງໄປທີ່ນັ້ນ. ພຣະຄັມພີແມ່ນຂ້ອນຂ້າງຊັດເຈນວ່ານະລົກມີຢູ່ຈິງ. ແລະພຣະເຈົ້າ, ໃນການເປີດເຜີຍຂອງພຣະອົງຕໍ່ພວກເຮົາ, ບໍ່ພຽງແຕ່ໃຫ້ຄວາມຮູ້ກ່ຽວກັບການມີຢູ່ຂອງມັນ, ແຕ່ຍັງໃຫ້ຄຳແນະນຳສະເພາະກ່ຽວກັບວິທີຫຼີກເວັ້ນຈາກການ

ຕົກເຂົ້າໄປຢູ່ໃນທີ່ນັ້ນຖາວອນເປັນນິດ. ໃນຂໍ້ນີ້, ໂປໂລໄດ້ກ່າວເຖິງການຂົ່ມເຫັງແລະຄວາມທຸກທໍລະມານທີ່ຜູ້ທີ່ເຊື່ອໃນເທຊະໂລນິກອົດທົນ. ເມື່ອໂປໂລຂຽນຈົດໝາຍສະບັບທີ່ສອງມາເຖິງຊາວເທຊະໂລນິກໃນປະມານ ຄສ 50-51, ລາດີອຸດເປັນຈັກກະພັດອານາຈັກໂຣມ. ໃນຖານະເປັນຫົວໜ້າຂອງອານາຈັກໂຣມ, ລາວໄດ້ຖືກນັບເຂົ້າກັບການນະມັສການວິນຍານທີ່ຢູ່ໃນໂລກຈັກກະວານທີ່ແຜ່ຫຼາຍໃນທຸກວັນນີ້. ແທ້ຈິງແລ້ວ, ຈັກກະພັດໂຣມໄດ້ຖືກກຳນົດວ່ານັບຖືສາສນາຂອງລັດທີ່ທີ່ຖືກລົງໂທດຈາກສວັນ-ກັບອານາຈັກອື່ນເຖິງແມ່ນວ່າເປັນພຣະເຈົ້າທີ່ມີຢູ່ໃນຂນະທີ່ພວກເຂົາບໍ່ມັກຄວາມຈິ່ງທີ່ວ່າມີການແຂ່ງຂັນສາສນາຢູ່ໃນສັງຄົມ, ແຕ່ພວກເຂົາຍັງຍອມປ່ອຍໃຫ້ມັນມີຢູ່ຍົກເວັ້ນເສັຽແຕ່ວ່າພວກເຂົາເຮັດໃຫ້ເກີດບັນຫາ. ການທີ່ໂປໂລຂຽນຈົດໝາຍສະບັບນີ້ ໄປເຖິງຄົນຢິວໃນກຸງໂຣມທີ່ອ້າງຕົວເອງໃນຖານະວ່າເປັນຜູ້ສ້າງຄວາມວຸ້ນວາຍຈົນວ່າລາດີອຸດໄດ້ຂັບໄລ່ພວກເຂົາອອກຈາກເມືອງ. ໃນມື້ນັ້ນໂຣມບໍ່ໄດ້ຈຳແນກລະຫ່ວາງຊາວຢິວແລະຊາວຄຣິສະຕຽນ, ດັ່ງນັ້ນຊາວຄຣິສະຕຽນຍັງໄດ້ຖືກຂັບໄລ່. ພວກເຂົາໄດ້ຖືກຍຶດຊັບສິນຂອງພວກເຂົາ, ຖືກຂັບໄລ່ອອກຈາກການຄ້າຂາຍ, ຖືກປະຕິເສດຈາກຄອບຄົວຂອງເຂົາເອງ, ຖືກດູຖູກ, ແລະບາງກໍລະນີ, ພວກເຂົາກໍ່ຖືກປະຫານຊີວິດ, ເຖິງແມ່ນວ່າມີສິ່ງທັງໝົດນີ້ເກີດຂຶ້ນ, ຊາວຄຣິສະຕຽນຫຼາຍໆຄົນໃນໂບດກໍ່ຍັງຢືນຂຶ້ນຢ່າງເຂັ້ມແຂງ, ແລະອັຄສາວົກໂປໂລໄດ້ຍົກຍ້ອງຊາວຄຣິສະຕຽນເທຊະໂລນິກທີ່ມີຄວາມອົດທົນຕໍ່ຄວາມທຸກທໍລະມານນີ້, ແລະຍັງມີຄວາມເຊື່ອຢ່າງຕໍ່ເນື່ອງຕໍ່ການປະເຊີນໜ້າກັບການຂົ່ມເຫັງ. ໂປໂລຍົກຍ້ອງພວກເຂົາສຳລັບຄວາມເຊື່ອທີ່ເຕີບໃຫ່ຍຂອງພວກເຂົາແລະເພີ່ມຄວາມຮັກຕໍ່ກັນແລະກັນ. ໂປໂລຮັບຮູ້ຄວາມຈິງທີ່ວ່າພວກເຂົາມີຄວາມເຊື່ອໃນພຣະຄຣິດທີ່ເຫັນໄດ້ເດັ່ນຊັດໃນຊີວິດຂອງພວກເຂົາ. ພຍານຄວາມສັດຊື່ຂອງພວກເຂົາ “ຈະຖືກນັບວ່າມີຄ່າສົມຄວນໃນອານາຈັກຂອງພຣະເຈົ້າ.” ໃນທີ່ນີ້ມີຄວາມໝາຍວ່າພວກເຂົາຈະໄປສວັນເມື່ອພວກເຂົາຊິ້ນອາຍຸໄຂໃນໂລກນີ້, ແຕ່ສິ່ງນັ້ນຈະບໍ່ເປັນໃນກໍລະນີຂອງຜູ້ທີ່ຂົ່ມເຫັງຄົນຂອງພຣະເຈົ້າ. ຈາກຄົນເຫຼົ່ານັ້ນທ່ານຂຽນວ່າ, “ພຽງແຕ່ພຣະເຈົ້າຕອບແທນຜູ້ທີເຮັດໃຫ້ເຈົ້າທຸກທໍລະມານ.” ພຣະເຈົ້າເປັນພຣະເຈົ້າແລະການກະທຳອັນຊົ່ວຂອງຜູ້ທີ່ເຮັດໃຫ້ເກີດຄວາມທຸກທໍລະມານນັ້ນຈະບໍ່ຖືກລົງໂທດ, ໃນຂນະທີ່ການລົງໂທດນັ້ນອາດຍັງບໍ່ທັນເກີດຂຶ້ນໃນທັນທີທັນໃດ, ແນ່ນອນວ່າມັນຈະເກີດ. ຄວາມໝາຍຂອງຂໍ້ຄວາມຈິງເຫຼົ່ານີ້ເຖິງແມ່ນວ່າໃນໂລກນີ້ພວກຄົນຜູ້ທີ່ຂົ່ມເຫັງນັ້ນຍັງບໍ່ຖືກລົງໂທດກໍ່ຕາມແຕ່ໃນທີ່ສຸດກໍ່ຈະຖືກຕັດສິນແລະຖືກລົງໂທດໃນບຶງໄຟນະລົກ. ໂປໂລໄດ້ສັງເກດເຫັນວ່າຄວາມຍຸດຕິທັມຂອງພຣະເຈົ້າຍັງຍຸດຕິທັມສຳລັບຜູ້ທີ່ຖືກຂົ່ມເຫັງທີ່ທົນທຸກທໍລະມານ. ພຣະອົງຍັ້ງຢືນໃນເຣື່ອງນີ້ໂດຍການຢືນຢັນວ່າພຣະເຈົ້າຈະໃຫ້ “ການບັນເທົາທຸກແກ່ພວກທີ່ທຸກຍາກລຳບາກ.”

## 2. 2 ເທຊະໂລນິກ 1:7ຂ-10

*7ຂ. ເມື່ອເວລາພຣະເຢຊູເຈົ້າຈະຊົງປາກົດຈາກຟ້າສວັນໃນແປວໄຟອັນຮ້ອນກ້າພ້ອມດ້ວຍໝູ່ເທວະດາຕົນມີຣິດຂອງພຣະອົງ, 8. ເພື່ອຈະລົງໂທດຕອບແທນຄົນທັງປວງທີ່ບໍ່ຮູ້ຈັກພຣະເຈົ້າ ແລະແກ່ຄົນທີ່ບໍ່ຍອມເຊື່ອຟັງຂ່າວປະເສີດເຣື່ອງພຣະເຢຊູເຈົ້າຂອງເຮົາທັງຫຼາຍ. 9. ຄົນພວກນັ້ນຈະໄດ້ຖືກໂທດຄືຄວາມວິນາດຈິບຫາຍເປັນນິດ ແລະແຍກຫ່າງຈາກພຣະພັກຂອງພຣະຜູ້ເປັນເຈົ້າແລະຈາກຣິດທານຸພາບອັນຮຸ່ງເຮືອງຂອງພຣະອົງ. 10. ໃນວັນນັ້ນ, ຄືເມື່ອພຣະອົງຈະສະເດັດມາເພື່ອຊົງຮັບພຣະກຽດຕິຍົດເພາະພວກໄພ່ພົນທັງປວງຂອງພຣະອົງ ແລະເພື່ອໃຫ້ເປັນທີ່ນິຍົມຊົມຊື່ນແກ່ຄົນທັງປວງທີ່ໄດ້ເຊື່ອ (ເພາະເຈົ້າທັງຫຼາຍໄດ້ເຊື່ອຄຳພຍານຂອງພວກເຮົາແລ້ວ).*

ການພຍາຍາມເຂົ້າໃຈເຣື່ອງໃດກໍຕາມທີ່ກ່ຽວຂ້ອງກັບນິລັນດອນ, ບໍ່ວ່າພວກເຮົາຈະເວົ້າກ່ຽວກັບສວັນຫຼືນະລົກ, ແມ່ນມີຄວາມຫຍຸ້ງຍາກເພາະວ່າພວກເຮົາໝາຍເຖິງສິ່ງທີ່ພວກເຮົາບໍ່ເຄີຍເຫັນຫຼືບໍ່ມີປະສົບການ. ຢ່າງໃດກໍ່ຕາມ, ມັນບໍ່ໄດ້ເຮັດໃຫ້ການເປັນຢູ່ຫຼືຄວາມຈິງຂອງພຣະເຈົ້າຫຼຸດນ້ອຍລົງ. ພຣະເຈົ້າໄດ້ເປີດເຜີຍສິ່ງຕ່າງໆກ່ຽວກັບສິ່ງນິລັນໂດຍຜ່ານທາງພຣະຄັມພີທີ່ພວກເຮົາສາມາດຮູ້ໄດ້ໂດຍອີງໃສ່ການດຳເນີນຢູ່ກ່ອນຂອງມະນຸດເຮົາ, ແລະການເປີດເຜີຍນັ້ນປະກອບມີຂໍ້ຄວາມໃນພຣະທັມ 2 ເທຊະໂລນິກ. ໃນໂລກແຫ່ງຄວາມຜິດບາບນີ້, ພວກເຮົາອາດຈະຖືກລໍ້ລວງໃຫ້ສົງສັຍວ່າພຣະເຈົ້າຢູ່ໃສຫຼືເປັນຫັຽງພວກເຮົາຈຶ່ງບໍ່ໄດ້ເຫັນຄວາມຍຸດຕິທັມຂອງພຣະອົງ. ໝັ້ນໃຈໄດ້; ການພິພາກສາຂອງພຣະອົງຈະມາເຖິງຢ່າງແນ່ນອນ. ອົງປະກອບຂອງຄວາມຍຸດຕິທັມຂອງພຣະເຈົ້າຈະມາເຖິງຄືການສະເດັດ

ມາຂອງອົງພຣະຜູ້ເປັນເຈົ້າຄືພຣະເຢຊູຄຣິດເອງ, ພ້ອມກັບທູດສວັນທີ່ໄປກັບພຣະອົງ. ໃນເວລານັ້ນ, ພຣະເຢຊູຈະ "ແກ້ແຄ້ນດ້ວຍໄຟທີ່ໄໝ້ຜູ້ທີ່ບໍ່ຮູ້ຈັກພຣະເຈົ້າແລະຜູ້ທີ່ບໍ່ເຊື່ອຟັງຂ່າວປະເສີດຂອງພຣະເຢຊູເຈົ້າຂອງພວກເຮົາ," ພຣະເຈົ້າຈະບໍ່ພຽງແຕ່ເອົາຄວາມຜິດຢ່າງຮ້າຍແຮງເທົ່ານັ້ນ, ແຕ່ພຣະອົງຖືວ່າເປັນການດູຖູກຂອງບຸກຄົນນັ້ນ. ພຣະອົງເປັນພຣະເຈົ້າອົງບໍຣິສຸດຢູ່ເໜືອສິ່ງຊົງສ້າງທັງປວງ, ແລະຄວາມບາບໃດກໍ່ຕາມບໍ່ສາມາດທຳລາຍຄວາມບໍຣິສຸດຂອງພຣະອົງ. ດັ່ງນັ້ນ, ມັນຖືກຕັດສິນຢ່າງເດັດຂາດ. ການພິພາກສາຂອງພຣະເຈົ້າບໍ່ພຽງແຕ່ມາ. ຕໍ່ສູ້ຜູ້ທີ່ປະຕິເສດພຣະຄຣິດ. ແຕ່ການພິພາກສາຂອງພຣະອົງແມ່ນຍັງຕໍ່ສູ້ຄົນທີ່ດຳເນີນຊີວິດທີ່ກົງກັນຂ້າມຕາມພຣະວັດຈະນະຂອງພຣະອົງດ້ວຍ. ການພິພາກສາມາເຖິງຜູ້ທີ່ "*ຄົນພວກນັ້ນຈະໄດ້ຖືກໂທດຄືຄວາມວິນາດຈິບຫາຍເປັນນິດ ແລະແຍກຫ່າງຈາກພຣະພັກຂອງພຣະຜູ້ເປັນເຈົ້າແລະຈາກຣິດທານຸພາບອັນຮຸ່ງເຮືອງຂອງພຣະອົງ.*" ສຳລັບຊາວຄຣິສະຕຽນ, ຄວາມຄິດກ່ຽວກັບຊີວິດນິລັນເປັນສງ່າຣາສີ. ໂດຍຜ່ານທາງພຣະຄຣິດ, ພວກເຮົາມີຊີວິດນິລັນ. ເຖິງຢ່າງໃດກໍ່ຕາມສຳລັບຜູ້ທີ່ບໍ່ໄດ້ຕິດຕາມພຣະຄຣິດ, ຄວາມຄິດກ່ຽວກັບຊີວິດນິລັນແມ່ນຍັງຢູ່ຫ່າງໄກ. ຖ້າບໍ່ມີພຣະຄຣິດ, ພວກເຂົາມີ "ຄວາມວິນາດຈິບຫາຍເປັນນິດ" ທີ່ແນ່ນອນ ແລະແນ່ນອນ-ນັ້ນແມ່ນ, ມັນຍັງສືບຕໍ່ຕລອດໄປ. ການພິພາກສານີ້ບໍ່ແມ່ນເປັນສິ່ງທີ່ພຣະເຈົ້າປາຖນາຕາມໃຈມັກ, ແຕ່ມັນເປັນສິ່ງທີ່ຜູ້ບໍ່ເຊື່ອຕັດສິນໃຈແລະໄດ້ຮັບ; ມັນເປັນຄ່າຕອບແທນຂອງ "ການລົງໂທດ." ການພິພາກສາຄັ້ງສຸດທ້າຍນີ້ແມ່ນຢູ່ໄກຈາກ "*ແລະແຍກຫ່າງຈາກພຣະພັກຂອງພຣະຜູ້ເປັນເຈົ້າແລະຈາກຣິດທານຸພາບອັນຮຸ່ງເຮືອງຂອງພຣະອົງ.*" ຜູ້ທີ່ໄດ້ຮັບໂທດສຳລັບຄວາມບາບຂອງພວກເຂົາຈະເປັນເຊັ່ນນັ້ນຈະບໍ່ຢູ່ໃນສະພາບແວດລ້ອມໃນທີ່ປະທັບຂອງພຣະເຈົ້າ. ອັນນີ້ເຮັດໃຫ້ນະລົກນີ້ເປັນຫຼາຍກວ່າບ່ອນລົງໂທດທາງຮ່າງກາຍ. ທັມມະຊາດຂອງການຖືກແຍກອອກຈາກພຣະເຈົ້າແມ່ນຫຼາຍກ່ວາການເຈັບປວດທາງຮ່າງກາຍ. ນະລົກເປັນບ່ອນທີ່ບໍ່ມີແສງສວ່າງ, ບໍ່ມີຄວາມຮັກ, ບໍ່ມີພຣະຄຸນ, ຫຼືບໍ່ມີຄວາມຫວັງ. ບໍ່ມີທີ່ປະທັບຂອງພຣະເຈົ້າ, ສິ່ງເຫຼົ່ານັ້ນທີ່ມາຈາກພຣະເຈົ້າກໍ່ບໍ່ມີເລີຍ. ຂໍ້ພຣະຄັມພີອື່ນໆທີ່ເຮັດໃຫ້ພວກເຮົາສະຫຼຸບໂດຍຫຍໍ້ກ່ຽວກັບລັກສນະຂອງນະລົກ. ພຣະເຈົ້າໄດ້ເປີດເຜີຍໃນຮູບພາບອື່ນໆໃນພຣະຄັມພີເພື່ອຊ່ວຍໃຫ້ພວກເຮົາບໍ່ພຽງແຕ່ເຂົ້າໃຈຄວາມຈິງຂອງການລົງໂທດຊົ່ວນິດນິລັນ, ແຕ່ຍັງເປັນລັກສນະທັມມະຊາດ. **1.** ຄວາມຕາຍ (ມັດທາຍ 10:28; ໂຣມ 6:23). **2.** ຄວາມມືດ (ມັດທາຍ 22:13; 2 ເປໂຕ 2:4). **3.** ຄວາມພິນາດ (ມັດທາຍ 7:13-14). **4.** ຮ້ອງໄຫ້ແລະກັດແຂ້ວ (ມັດທາຍ 24:51). **5.** ໂຕໜອນກໍບໍ່ຮູ້ຕາຍ (ມາຣະໂກ 9:46-48). **6.** ໄຟທີ່ບໍ່ຮູ້ມອດ (ລູກາ 16:23-24; ພຣະນິມິດ 20:14-15). **7.** ການລົງໂທດ (ເຮັບເຣີ 10:28-31). <u>ແທ້ຈິງ, ນະລົກມີແທ້!</u> ແລະຜູ້ທີ່ເລືອກທີ່ຈະມີຊີວິດຢູ່ໂດຍບໍ່ຍອມຮັບຮູ້ພຣະຄຣິດກໍ່ຈະປະເຊີນກັບການລົງໂທດຊົ່ວນິດນິລັນ.

## 3. 2 ເທຊະໂລນິກ 1:11-12

*11. ເພາະເຫດສັນນັ້ນແຫຼະ, ພວກເຮົາຈຶ່ງອ້ອນວອນສຳລັບເຈົ້າທັງຫຼາຍຢູ່ສເມີ ຂໍໃຫ້ພຣະເຈົ້າຂອງເຮົາທັງຫຼາຍ ຊົງໂຜດຖືວ່າພວກເຈົ້າເປັນຜູ້ເໝາະສົມແກ່ການທີ່ພຣະອົງຊົງເອີ້ນເອົານັ້ນ ແລະຂໍຊົງບັນດານດ້ວຍຣິດອຳນາດຂອງພຣະອົງໃຫ້ຄວາມຕັ້ງໃຈດີທຸກປະການກັບການງານຂອງຄວາມເຊື່ອທຸກຢ່າງໃຫ້ສຳເລັດ. 12. ເພື່ອພຣະນາມຂອງພຣະເຢຊູເຈົ້າຂອງເຮົາທັງຫຼາຍຈະໄດ້ຮັບກຽດຕິຍົດເພາະພວກເຈົ້າແລະເພື່ອພວກເຈົ້າຈະໄດ້ກຽດຕິຍົດເພາະພຣະອົງ ຕາມພຣະຄຸນແຫ່ງພຣະເຈົ້າຂອງເຮົາທັງຫຼາຍແລະແຫ່ງພຣະເຢຊູຄຣິດເຈົ້າ*

ເມື່ອຂ້າພະເຈົ້າຖືກເຊີນໃຫ້ແບ່ງປັນການຝຶກອົບຮົມຢູ່ໃນໂບດເຣື່ອງມຸມມອງໂລກຂອງຄຣິສະຕຽນ, ຂ້າພະເຈົ້າຖືວ່າເປັນກຽດອັນສູງສົ່ງ. ມັນບໍ່ແມ່ນເຣື່ອງເລັກນ້ອຍທີ່ຈະໄດ້ຮັບຄວາມໄວ້ໃຈຈາກສິດຍາພິບານແລະສະມາຊິກໂບດໃຫ້ແບ່ງປັນກັບພວກເຂົາ. ພວກສິດຍາພິບານຕ້ອງມີຄວາມລະມັດລະວັງຫຼາຍໃນການອະນຸຍາດໃຫ້ຄົນອື່ນມາເວົ້າກັບຄຣິສຕະຈັກຂອງເພິ່ນ. ເພາະພວກເພິ່ນຖືກຮັບຜິດຊອບບໍ່ພຽງແຕ່ສິດສອນຄວາມຈິງໃຫ້ກັບຄຣິສຕະຈັກເທົ່ານັ້ນ, ແຕ່ຍັງປົກປ້ອງພວກເຂົາຈາກຄຳສອນປອມໂດຍຈະບໍ່ອະນຸຍາດໃຫ້ບາງຄົນໄດ້ນຳພາໃຫ້ພວກເຂົາຫຼົງທາງຫັນໜີຈາກພຣະເຈົ້າ. ມີສອງສິ່ງທີ່ກະຕຸ້ນໃຫ້ຂ້າພະເຈົ້າແນ່ໃຈວ່າຂ້າພະເຈົ້າເປັນຜູ້ປະກາດທີ່ເຊື່ອຖືໄດ້. ອັນທີ່ນຶ່ງແມ່ນຄວາມສັມພັນສ່ວນຕົວຂອງຂ້າພະເຈົ້າກັບພຣະເຈົ້າແລະຄຳໝັ້ນສັນຍາຂອງຂ້າພະເຈົ້າທີ່ຈະເຮັດໃຫ້ດີທີ່ສຸດຕໍ່ພຣະອົງ. ແຮງຈູງ

ໃຈອັນທີ່ສອງແມ່ນຄວາມສັດຊື່ໃນຄວາມຮັກຕໍ່ໄພ່ພົນຂອງພຣະເຈົ້າ. ທັງສອງຢ່າງນີ້ຮ່ວມກັນກະຕຸ້ນເຮັດໃຫ້ຂ້າພະເຈົ້າຢາກເຮັດໃຫ້ດີທີ່ສຸດ. ຊາວຄຣິສະຕຽນເຮົາທຸກຄົນຄວນມີແຮງຈູງໃຈເຊັ່ນນີ້, ໂດຍອີງໃສ່ຄວາມຮັກແລະຄວາມກະຕັນຍູຕໍ່ພຣະເຈົ້າ, ເພື່ອພຣະອົງຈະໄດ້ຮັບກຽດໃນຊີວິດຂອງພວກເຮົາ. ໂປໂລໄດ້ຂຽນກ່ຽວກັບການຕັດສິນທີ່ຈະມາເຖິງແລະການແຍກຈາກຊີວິດນິລັນສໍາລັບຜູ້ທີ່ປະຕິເສດທີ່ຈະຫັນກັບມາຫາພຣະອົງ. ໃນ 2 ເທຊະໂລນິກ 1:11, ທ່ານໄດ້ປ່ຽນວິທີທາງເພື່ອຊຸກຍູ້ໃຫ້ຜູ້ເຊື່ອຊາວເທຊະໂລນິກຕັດສິນໃຈທີ່ຖືກຕ້ອງທີ່ຈະກະຕຸ້ນໃຫ້ພວກເຂົາມີຊີວິດທີ່ສົມຄວນແກ່ການຊົງເອີ້ນຂອງພວກເຂົາ. ຊີວິດຄຣິສະຕຽນບໍ່ໄດ້ປະສົບຜົນສໍາເຣັດໂດຍການທໍາດີ; ແຕ່ປະສົບຜົນສໍາເຣັດໄດ້ໂດຍຜ່ານຄວາມສັມພັນໃນພຣະຄຣິດ, ເຖິງຢ່າງໃດກໍ່ຕາມ, ມັນແມ່ນຍ້ອນການພົວພັນແບບມີການເຄື່ອນໄຫວ, ພວກເຮົາໄດ້ຮັບການກະຕຸ້ນດ້ວຍ "ຄວາມປາຖນາທີ່ຈະເຮັດດີ" ແລະດໍາເນີນຊີວິດ "ສົມຄວນກັບການຮຽກເອີ້ນຂອງພຣະອົງ." ໂປໂລບໍ່ໄດ້ຢຸດຢູ່ທີ່ນັ້ນ, ທ່ານຍັງຕ້ອງການໃຫ້ພວກເຂົາສະແດງ "ການກະທໍາດ້ວຍຄວາມເຊື່ອ." ໃນເວລາທີ່ພວກເຮົາດໍາເນີນຊີວິດຢູ່ໃນສາຍສັມພັນທີ່ໃກ້ຊິດກັບພຣະເຈົ້າ. ພຣະວິນຍານບໍຣິສຸດຂອງພຣະອົງຈະສໍາແດງພະລັງຂອງພຣະເຈົ້າຜ່ານທາງຊີວິດຂອງພວກເຮົາໃນວິທີການທີ່ຈະສະແດງໃຫ້ເຫັນຕົນເອງໃນການດໍາເນີນຊີວິດທີ່ບໍຣິສຸດແລະໃນການເປັນພຍານທີ່ມີຣິດອໍານາດ. ເບິ່ງຄໍາອະທິຖານຂອງໂປໂລໃນຄວາມສວ່າງຂອງສິ່ງທີ່ທ່ານໄດ້ເວົ້າແລ້ວກ່ຽວກັບຄວາມອົດທົນຂອງຜູ້ເຊື່ອແລະຄວາມເປັນຈິງຂອງການລົງໂທດຊົ່ວນິດນິລັນທີ່ລໍຖ້າຜູ້ທີ່ບໍ່ເຊື່ອໃນພຣະຄຣິດ. ຈົ່ງພິຈາລະນາເບິ່ງຜົນສະທ້ອນອັນຮ້າຍແຮງຂອງຄວາມເປັນນິດທີ່ປາສຈາກພຣະຄຣິດ, ເມື່ອພວກເຮົາດໍາເນີນຊີວິດທີ່ມີຄຸນຄ່າຂອງພຣະຄຣິດ, ພວກເຮົາໄດ້ໃຫ້ການເປັນພຍານໃນທາງບອກເຖິງຄວາມສຸກຂອງຊີວິດທີ່ມີຢູ່ໃນພຣະຄຣິດ. ພຍານຂອງພວກເຮົາໃນລັກສນະນີ້ແມ່ນໂອກາດສໍາລັບຄົນອື່ນທີ່ຈະຄົ້ນພົບຄວາມຮັກແລະພຣະຄຸນຂອງພຣະຄຣິດສໍາລັບຕົນເອງແລະໄດ້ຮັບການປົດປ່ອຍຈາກຜົນຂອງຄວາມບາບ, ຄວາມຕາຍ, ແລະນະລົກ. ຜູ້ເຊື່ອທີ່ສັດຊື່ຈະຫຼີກລ້ຽງນະລົກຍ້ອນຄວາມສັມພັນຂອງເຂົາກັບພຣະເຈົ້າ. ເຮົາຈະປ່ຽນເປັນຄືກັບພຣະເຢຊູ! ທັງໝົດນີ້ແມ່ນເປັນໄປໄດ້ "ຕາມພຣະຄຸນຂອງພຣະເຈົ້າຂອງພວກເຮົາແລະພຣະຜູ້ເປັນເຈົ້າພຣະເຢຊູຄຣິດ" ທັງໝົດນີ້ເກີດຂຶ້ນຈາກພຣະຄຸນຂອງພຣະເຈົ້າໂດຍອີງໃສ່ຄວາມລອດທີ່ພຣະອົງໄດ້ສນອງໃຫ້ໂດຍຜ່ານການຕາຍແລະການຟື້ນຄືນພຣະຊົນຂອງພຣະເຢຊູຄຣິດຂອງພວກເຮົາ.

## ນໍາໃຊ້ໃນຊີວິດ

ການລົງໂທດອັນຕລອດໄປເປັນນິດລໍຄອຍຜູ້ທີ່ບໍ່ຕິດຕາມພຣະຄຣິດຢູ່. ຈົ່ງເລືອກຂໍ້ນຶ່ງໃນການນໍາໃຊ້ຕໍ່ລົງໄປນີ້:

- **ໄວ້ວາງໃຈ.** ຖ້າຫາກວ່າທ່ານບໍ່ແນ່ໃຈວ່າບ່ອນໃດທີ່ທ່ານຈະໃຊ້ເວລາຊົ່ວນິລັນດອນ, ທ່ານສາມາດແກ້ໄຂມັນໄດ້ໂດຍຫັນມາເຊື່ອວາງໃຈໃນພຣະຄຣິດ. ຈົ່ງວາງໃຈພຣະອົງຕໍ່ການຊ່ວຍຊີວິດຂອງທ່ານໃຫ້ພົ້ນ. ທ່ານສາມາດໄດ້ຮັບຄວາມຊ່ວຍເຫຼືອໃນເຣື່ອງນີ້ໂດຍການວາງໃຈເຊື່ອໃນພຣະເຢຊູຄຣິດເຈົ້າໄດ້.
- **ສຶກສາ.** ສຶກສາເບິ່ງປໂຍກໃນພຣະຄັມພີທີ່ໝາຍເຖິງນະລົກ, ອ່ານແລະຂຽນລາຍລະອຽດຂອງນະລົກໂດຍອີງໃສ່ການຄົ້ນພົບຂອງທ່ານ, ຂອບພຣະຄຸນພຣະເຈົ້າສໍາລັບການໄຖ່ທ່ານອອກຈາກຄວາມມືດໂດຍຜ່ານທາງພຣະຄຣິດ.
- **ບອກ.** ສ່ວນຫຼາຍພວກເຮົາມີດຽງບທີ່ຈະບອກຄົນອື່ນກ່ຽວກັບພຣະເຢຊູ, ແຕ່ຈົ່ງໃຫ້ຄວາມຈິງຂອງນະລົກເປັນແຮງຈູງໃຈພາຍໃນທີ່ຈະບອກຄົນອື່ນກ່ຽວກັບຄວາມຮັກແລະຄວາມລອດພົ້ນຂອງພຣະຄຣິດ. ຈົ່ງອະທິຖານຫາໂອກາດທີ່ຈະແບ່ງປັນພຣະຄຣິດ, ແລະເມື່ອໂອກາດນັ້ນປາກົດຕົວອອກ, ຈົ່ງກ້າວເຂົ້າຫາມັນຢ່າງກ້າຫານດ້ວຍພະລັງອໍານາດຂອງພຣະຄຣິດ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ VR**